ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********

ທະນາຄານແຫ່ງ ສປປ ລາວ

ເລກທີ 1008/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 17 NOV 2016

# ຂໍ້ຕົກລົງ

## ວ່າດ້ວຍການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ສະບັບເລກທີ 164/ກຄທ, ລົງວັນທີ 25 ຕຸລາ 2016.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກຂໍ້ຕົກລົງດັ່ງນີ້:

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອກຳນົດລະບຽບການ ແລະ ມາດຕະການກ່ຽວກັບການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ, ຫຼຸດຜ່ອນຄວາມສ່ຽງຂອງທະນາຄານ ແລະ ໃຫ້ເໝາະສົມກັບສະພາບຕົວຈິງ ຂອງການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ໃນປະຈຸບັນ, ແນໃສ່ປະກອບສ່ວນເຂົ້າໃນການປະຕິບັດນະໂຍບາຍສົ່ງເສີມການນຳໃຊ້ເງິນກີບ ແລະ ການຮັກສາສະຖຽນລະພາບຂອງເງິນຕາແຫ່ງຊາດ.

### ມາດຕາ 2 ການອະທິບາຍຄຳສັບ

ບັນດາຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງຕໍ່ໄປນີ້:

1. **"ສິນເຊື່ອ"** ໝາຍເຖິງ ເງິນກູ້ (Loan), ເງິນເບີກເກີນບັນຊີ (OD) ແລະ ເງິນຈ່າຍລ່ວງໜ້າໃຫ້ແກ່ລູກຄ້າ (Advance);

2. "**ຜູ້ທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ**" ໝາຍເຖິງ ຜູ້ທີ່ມີລາຍຮັບເປັນເງິນຕາຕ່າງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
3. "**ທະນາຄານ**" ໝາຍເຖິງ ທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ສ້າງຕັ້ງຂຶ້ນ ພາຍໃຕ້ກົດໝາຍ ຂອງ ສປປ ລາວ.

**ມາດຕາ 3 ຂອບເຂດໃນການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ**

ທະນາຄານສາມາດສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ໃຫ້ຜູ້ທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ. ນອກຈາກນັ້ນ, ທະນາຄານສາມາດສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ໃຫ້ຜູ້ທີ່ບໍ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ ແຕ່ຕ້ອງການເງິນຕາຕ່າງປະເທດເພື່ອຊໍາລະສິນຄ້າທີ່ນໍາເຂົ້າໂດຍກົງຈາກຕ່າງປະເທດດັ່ງຕໍ່ໄປນີ້:

- ກົນຈັກ, ພາຫະນະ, ອຸປະກອນ ແລະ ວັດສະດຸ (ລວມທັງແນວພັນພືດ, ແນວພັນສັດ, ປຸຍ ແລະ ຢາປາບສັດຕູພືດ) ເພື່ອນໍາໃຊ້ເຂົ້າໃນການຜະລິດກະສິກໍາໂດຍກົງ;
- ກົນຈັກ, ພາຫະນະ, ອຸປະກອນ ແລະ ວັດສະດຸເພື່ອນໍາໃຊ້ເຂົ້າໃນການຜະລິດອຸດສາຫະກໍາໂດຍກົງ;
- ຢາ ແລະ ອຸປະກອນການແພດເພື່ອນໍາໃຊ້ເຂົ້າໃນວຽກງານປິ່ນປົວໂດຍກົງ;
- ນໍ້າມັນເຊື້ອໄຟ ແລະ ອາຍແກັດ.

ທະນາຄານສາມາດອອກໜັງສືສິນເຊື່ອ (L/C) ແລະ ການຄໍ້າປະກັນ (B/G) ເປັນເງິນຕາຕ່າງປະເທດໃຫ້ບັນດາວິສາຫະກິດເພື່ອຮັບໃຊ້ໃຫ້ແກ່ການນໍາເຂົ້າສິນຄ້າ ຫຼື ການບໍລິການຕ່າງໆໄດ້ ໂດຍຕ້ອງຮັບປະກັນວ່າວິສາຫະກິດດັ່ງກ່າວ ມີເງິນພຽງພໍໃນການຊໍາລະຄ່າສິນຄ້າ ຫຼື ການບໍລິການດັ່ງກ່າວ.

**ມາດຕາ 4 ການບໍລິຫານຄວາມສ່ຽງໃນການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ**

ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະເກີດຈາກການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ, ທະນາຄານຕ້ອງປະຕິບັດດັ່ງນີ້:

1. ມີນະໂຍບາຍ ແລະ ກົນໄກການບໍລິຫານຄວາມສ່ຽງທີ່ລະອຽດ, ຮັດກຸມ ແລະ ສອດຄ່ອງກັບວິທີປະຕິບັດທີ່ດີຂອງສາກົນ ຊຶ່ງຕ້ອງຜ່ານການຮັບຮອງໂດຍສະພາບໍລິຫານຂອງທະນາຄານ ຫຼື ຂອງສໍານັກງານໃຫຍ່ (ກໍລະນີສາຂາທະນາຄານຕ່າງປະເທດ);
2. ເປັນເຈົ້າການໃນການບໍລິຫານຄວາມຕ້ອງການແຫຼ່ງທຶນທີ່ເປັນເງິນຕາຕ່າງປະເທດໃຫ້ເໝາະສົມ ເພື່ອໃຫ້ສອດຄ່ອງກັບແຜນການ ແລະ ຄວາມສາມາດຂອງທະນາຄານໃນການສ້າງລາຍໄດ້ຈາກແຫຼ່ງທຶນດັ່ງກ່າວ;
3. ມີລະບຽບຂັ້ນຕອນລະອຽດ ແລະ ຮັດກຸມໃນການກວດກາແຫຼ່ງລາຍຮັບຂອງຜູ້ກູ້ຢືມ ແລະ ເປົ້າໝາຍການນໍາໃຊ້ສິນເຊື່ອຂອງຜູ້ກູ້ຢືມເພື່ອຮັບປະກັນວ່າ (1) ຜູ້ກູ້ຢືມມີແຫຼ່ງລາຍຮັບພຽງພໍເພື່ອຊໍາລະໜີ້; ແລະ (2) ການນໍາໃຊ້ສິນເຊື່ອ ແລະ ແຫຼ່ງທຶນທີ່ຈະນໍາມາຊໍາລະໜີ້ແມ່ນສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ;